vath - illgal tabaco

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນ ລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການຄ້າ

ເລກທີ 0818/ກຄ.ຕປທ

ວຽງຈັນ ,ວັນທີ 29 JUL 2002

## ຄຳສັ່ງແນະນຳເພີ້ມເຕີມ

ເຖິງ: ທ່ານຫົວໜ້າພະແນກການຄ້າແຂວງ, ກຳແພງນະຄອນ ແລະ ເຂດພິເສດ,

ເລື້ອງ: ການສະກັດກັ້ນ ການນຳເຂົ້າ ແລະ ການຈຳໜ່າຍ ຢາສູບເຖື່ອນ.

- ອີງຕາມຄຳສັ່ງແນະນຳ ຂອງກະຊວງການຄ້າ ສະບັບເລກທີ 0745/ກຄທ, ລົງວັນທີ12/8/99 ກ່ຽວກັບບັນຫາຢາສູບເຖື່ອນທີ່ນຳເຂົ້າມາຂາຍຢູ່ພາຍໃນປະເທດ,
- ອີງຕາມຈົດໝາຍ ຂອງກະຊວງອຸດສາຫະກຳ ແລະ ຫັດຖະກຳ ສະບັບ ເລກທີ 288/ອຫ, ລົງວັນທີ 5/7/02 ກ່ຽວກັບ ການນຳເຂົ້າຢາສູບຜິດກົດໝາຍ ມາຂາຍຢູ່ພາຍໃນປະເທດ.

ໃນເມື່ອກ່ອນ ກະຊວງການຄ້າ ໄດ້ອອກຄຳສັ່ງແນະນຳເພື່ອຕ້ານ ແລະ ສະກັດກັ້ນ ການຈຳໜ່າຍຢາສູບເຖື່ອນ (ຄຳສັ່ງແນະນຳ ເລກທີ 0745/ກຄທ,ລົງວັນທີ12/8/99). ຜ່ານການຈັດຕັ້ງປະຕິບັດເຫັນວ່າ ໄດ້ຮັບໝາກຜົນຈຳນວນໜຶ່ງເທົ່ານັ້ນ. ຕາມຂໍ້ມູນຈາກກະຊວງອຸດສາຫະກຳ ແລະ ຫັດຖະກຳ ແຈ້ງໃຫ້ຊາບວ່າໃນປະຈຸບັນ ຍັງມີ ຢາສູບຕ່າງປະເທດ ຈຳນວນ 90.000ຫີບ ຕໍ່ປີ ໄດ້ນຳເຂົ້າມາຈຳໜ່າຍຢູ່ພາຍໃນປະເທດ ແບບບໍ່ຖືກລະບຽບກົດໝາຍ ຂອງບ້ານເມືອງ, ຊຶ່ງໄດ້ສ້າງຄວາມເສຍຫາຍອັນໃຫຍ່ຫຼວງໃຫ້ແກ່ ປະເທດຊາດ. ການນຳເຂົ້າ ຢາສູບເຖື່ອນ ມີລັກສະນະ ລຸ່ມນີ້:

- ບໍ່ມີໃບອະນຸຍາດນຳເຂົ້າ ຈາກຂະແໜງການຄ້າ,
- ບໍ່ມີ ຫຼັກຖານກ່ຽວກັບການເສຍພາສີຂາເຂົ້າ ແລະ ອາກອນ,
- ບໍ່ມີສະແຕັມ ອາກອນ ຂອງ ລາວ ຕິດໃສ່ຊອງຢາສູບ.

ດັ່ງນັ້ນ, ເພື່ອສືບຕໍ່ສະກັດກັ້ນການນຳເຂົ້າ ແລະ ການຈຳໜ່າຍຢາສູບເຖື່ອນ ກະຊວງການຄ້າ ຈຶ່ງອອກຄຳສັ່ງແນະນຳເພີ້ມເຕີມມາຍັງ ພະແນກການຄ້າແຂວງ, ກຳແພງນະຄອນ ແລະ ເຂດພິເສດ ຈົ່ງໄດ້ສືບຕໍ່ປະສານສົມທົບກັບຂະແໜງການເງິນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງເພື່ອຄົ້ນຄວ້າວິທີຈັດຕັ້ງການສະກັດກັ້ນ ແລະ ການຄ້າເຖື່ອນ ເພື່ອນຳສະເໜີຕໍ່ທ່ານເຈົ້າແຂວງ, ເຈົ້າຄອງ ແລະ ທ່ານຫົວໜ້າເຂດພິເສດ ໂດຍໃຫ້ມີຄວາມເຂັ້ມງວດໃນການກວດກາ ແລະ ປະຕິບັດວິໃນ ຄື : ຢຶດ ແລະ ທຳລາຍຖິ້ມ ຢ່າງເດັດຂາດ.

ຈຶ່ງແຈ້ງມາເພື່ອຊາບ ແລະ ຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ.

ນຳສົ່ງ:

- ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ
- ກະຊວງອຸດສາຫະກຳ ແລະ ຫັດຖະກຳ

" ເພື່ອຊາບຕາງລາຍງານ"

ລັດຖະມົນຕີວ່າການກະຊວງການຄ້າ,

ພົນ ທິບພະວານ